**ບົດກ່າວເປີດ ຂອງ**

**ທ່ານ ສົມຈິດ ອິນທະມິດ, ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ**

**ຕໍ່ພິທີເປີດງານວາງສະແດງກະສິກຳອິນຊີ (ສວນເຈົ້າຟ້າງຸ່ມ)**

**ວັນທີ 28/11/2019, ສວນເຈົ້າຟ້າງຸ່ມ**

**ຮຽນ:**

- ທ່ານ ດຣ ບຸນຂວາງ ຄຳບຸນເຮືອງ, ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້
- ບັນດາທ່ານແຂກຜູ້ມີກຽດຈາກພາຍໃນແລະຕ່າງປະເທດ, ຜູ້ຜະລິດ ແລະ ຜູ້ປະກອບການ,

ໂດຍສົມທົບກັບອົງການຈັດຕັ້ງພາກລັດທຸກຂະແໜງການ, ອົງການຈັດຕັ້ງສາກົນ, ຜູ້ປະກອບການ ຫົວໜ່ວຍການຜະລິດກະສິກຳ ແລະ ພາກສ່ວນຕ່າງໆ, ຂ້າພະເຈົ້າຕາງໜ້າກະຊວງອຸດສາຫະກຳ ແລະ ການຄ້າຮູ້ສຶກດີໃຈ ແລະ ຂອບໃຈມາຍັງທຸກພາກສ່ວນທີ່ເຮັດໃຫ້ ງານວາງສະແດງສິນຄ້າກະສິກຳອິນຊີໃນຄັ້ງນີ້ ເກີດຂຶ້ນ, ພວກເຮົາຖືໄດ້ວ່າ ງານຄັ້ງນີ້ ເປັນງານທີ່ມີຄວາມໝາຍຄວາມສຳຄັນ ທີ່ມັນໄດ້ສະແດງໃຫ້ເຫັນເຖິງການເອົາໃຈໃສ່ທຸກພາກສ່ວນ ທີ່ໄດ້ພ້ອມພຽງກັນເອົາໃຈໃສ່ພັດທະນາຂະແໜງກະສິກຳອິນຊີຂອງ ສປປ ລາວ ໃຫ້ເກີດຂຶ້ນ ແລະ ມີຜົນງານນຳມາວາງສະແດງໃນຄັ້ງນີ້.

ຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ ງານວາງສະແດງໃນຄັ້ງນີ້ ຈະເປັນໂອກາດອັນດີ ໃນການສ້າງໃຫ້ຜູ້ປະກອບການ ນຳເອົາຜົນງານມານຳສະເໜີ ແລະ ເຮັດໃຫ້ຜູ້ຊົມໃຊ້ພາຍໃນ ມາຈອດກັນ ເພື່ອສ້າງໃຫ້ປະຊາຊົນລາວເຮົາ ໄດ້ຫັນມານິຍົມຊົມຊອບ ແລະ ພ້ອມທັງຊົມໃຊ້ພືດຜັກປອດສານພິດຂອງປະເທດເຮົາເອງ, ພວກເຮົາຍາມໃດກໍ່ຊຸກຍູ້ສົ່ງເສີມສິນຄ້າທີ່ຄົນລາວຜະລິດພາຍ ແລະ ໄດ້ຊອກຫາສະຖານທີ່ ວາງຂາຍ ຫລື ຈັບຄູ່ທຸລະກິດໃຫ້ຜູ້ປູກ ມາພົບກັບຮ້ານຄ້າ ເພື່ອໃຫ້ມີບ່ອນຈຳໜ່າຍທີ່ຖາວອນເວົ້າລວມ, ເວົ້າສະເພາະກໍ່ເພື່ອສົ່ງເສີມການຜະລິດພາຍໃນ ເພື່ອກະຕຸ້ນເສດຖະກິດພາຍໃນປະເທດໃຫ້ມີບັນຍາກາດຄຶກຄື້ນ ຫລື ຫລຸດຜ່ອນການນຳເຂົ້າສິນຄ້າກະສິກຳ ຈາກປະເທດເພື່ອນບ້ານ.

ໃນງານວາງສະແດງຄັ້ງນີ້ ຍັງນອກຈາກ ພືດຜັກປອດສານພິດແລ້ວ, ຍັງມີສິນຄ້າ ODOP ຂອງລາວ ຈຳນວນ 04 ຫົວໜ່ວຍ ເຊິ່ງປະກອບດ້ວຍສິນຄ້າຫຼາກຫຼາຍເຊັ່ນ: ກະແລັມ, ນ້ຳໝາກກ້ຽງ , ໜັງເຄັມ, ໝໍ້າ, ຜະລິດຕະພັນຢາພື້ນເມືອງ ແລະ ອື່ນໆ ມາຮ່ວມວາງສະແດງໃນຄັ້ງນີ້, ທັງນີ້ ກໍ່ເພື່ອຊຸກຍູ້ສົ່ງເສີມສິນຄ້າ ລາວເຮົາໃຫ້ເປັນທີ່ຮູ້ຈັກ ແລະ ສ້າງໃຫ້ມີການຊົມໃຊ້ສິນຄ້າທີ່ພວກເຮົາຜະລິດໄດ້.

ບັນດາທ່ານທີ່ຮັກແພງ, ເພື່ອຈັດຕັ້ງຜັນຂະຫຍາຍມະຕິຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 51/ນຍ. ລົງວັນທີ30/8/2019 ວ່າດ້ວຍການສົ່ງເສີມການຊົມໃຊ້ຜະລິດຕະພັນທີ່ຜະລິດໄດ້ຢູ່ພາຍໃນ ແລະ ຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ໃຫ້ນັບມື້ຫລຸດລົງ, ດ້ວຍເຫດນີ້

ທາງກອງເລຂາຄະນະສະເພາະກິດສົ່ງເສີມການ ແລະ ຊົມໃຊ້ຜະລິດຕະພັນທີ່ຜະລິດໄດ້ຢູ່ພາຍໃນ ຍັງໄດ້ສືບຕໍ່ຈັດງານຕະຫລາດນັດຜະລິດຕະພັນກະສິກຳຂື້ນ ໃນວັນທີ 30/11 – 01/12/2019 ທີ່ເດີ່ນຈອດລົດດ້ານໜ້າ ສູນການຄ້າລາວ-ໄອເຕັກ, ເຊິ່ງພາຍໃນງານດັ່ງກ່າວ ທ່ານຈະໄດ້ທ່ຽວຊົມ ແລະ ເລືອກຊື້ສິນຄ້າກະສິກຳພືດຜັກ, ຜັກອິນຊີ, ສິນຄ້າໂອດ່ອບ, ອຸດສາຫະກຳປຸງແຕ່ງ ແລະ ສິນຄ້າຄອບຄົວຕົວແບບທີ່ມາຈາກ 9 ຕົວເມືອງທົ່ວນະຄອນຫລວງວຽງຈັນ ມີທັງຫມົດຫລາຍກວ່າ 300 ຫົວໜ່ວຍທຸລະກິດ. ຂໍເຊີນຫົວໜ່ວຍທຸລະກິດ ທຸກໆທ່ານເຂົ້າມີສ່ວນຮ່ວມໃນການງານດັ່ງກ່າວ ເພື່ອສືບຕໍ່ສົ່ງເສີມສິນຄ້າລາວເຮົາດ້ວຍ.

ບັນດາທ່ານທີ່ຮັກແພງ

ຂ້າພະເຈົ້າເຊື່ອຫມັ້ນວ່າ ການຈັດງານຕະຫລາດນັດໃນຄັ້ງນີ້ ຈະເປັນບາດກ້າວໃຫມ່ທີ່ສຳຄັນຫລາຍຕໍ່ຊາວກະສິກອນຜູ້ຜະລິດ ແລະ ຜູ້ບໍລິໂພກໄດ້ຫັນມາຊົມໃຊ້ສິນຄ້າຂອງຄົນລາວນັບມື້ນັບຫລາຍບໍ່ວ່າຈະເປັນສິນຄ້າຜັກອິນຊີ ຫຼື ຜັກທີ່ຜະລິດຕາມທຳມະຊາດກໍ່ດີ ໂດຍອີງຕາມສະພາບຄວາມຈຳເປັນຂອງແຕ່ລະທ່ານໃນການຊົມໃຊ້ໃນຊີວິດປະຈຳວັນ.

ທ້າຍສຸດນີ້ ຂໍຕາງໜ້າໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຂໍອວຍພອນໄຊໃຫ້ແກ່ບັນດາທ່ານແຂກທີ່ມີກຽດ ແລະ ນັກທຸລະກິດຈົ່ງມີສຸຂະພາບແຂງແຮງ, ມີຄວາມສຸກໃນຊີວິດຄອບຄົວ, ມີຄວາມຈະເລີນກ້າວ ໜ້າໃນໜ້າທີ່ວຽກງານ ແລະ ອວຍພອນໃຫ້ງານຕະຫລາດນັດຄັ້ງນີ້ຈົ່ງປະສົບຜົນສຳເລັດ.

**ຂໍຂອບໃຈ**